ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານຂໍ້ມູນຕ້ານການຟອກເງິນ ເລກທີ 1641 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 25 DEC 2018

# ແຈ້ງການ

ເຖິງ: ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດປະກັນໄພ ທີ່ນັບຖື.

ເລື່ອງ: ການປັບປຸງລະບົບການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (STR) ແລະ ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ (CTR).

- ອີງຕາມກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 13/ຄຕຟງ, ລົງວັນທີ 19 ຕຸລາ 2015;
- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015.

ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ , ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດປະກັນໄພ ໃນຂອບເຂດທົ່ວປະເທດ ຊາບວ່າ ເພື່ອໃຫ້ການລາຍງານທຸລະກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (STR), ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ (CTR) ແລະ ການສະໜອງຂໍ້ມູນຕ່າງໆຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂດຍສະເພາະບັນດາສະຖາບັນການເງິນ ມີຄວາມວ່ອງໄວ, ທັນສະພາບການ, ຮັກສາຄວາມລັບການລາຍງານ ແລະ ຮອງຮັບໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການການກໍ່ການຮ້າຍ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເວົ້າລວມ ເວົ້າສະເພາະກໍ່ຄື ສະຖາບັນການເງິນ ທີ່ພວມກ້າວເຂົ້າສູ່ຂັ້ນຕອນການປະຕິບັດໃຫ້ມີປະສິດ



Scanned with CamScanner

ທີ່ພາບ. ສະນັ້ນ, ສຕຟງ ຈຶ່ງໄດ້ຄົ້ນຄວ້າປັບປຸງລະບົບການລາຍງານ STR ແລະ CTR ທາງເອເລັກໂຕນິກ Online ກໍ່ຄື ທຸກໆເອກະສານການລາຍງານ ແລະ ແຈ້ງຕອບແມ່ນຜ່ານລະບົບ ຫຼື ກໍລະນີຈໍາເປັນແມ່ນຜ່ານທາງເອກະສານ (ລາຍລະອຽດ ສາມາດເຂົ້າເບິ່ງ ຫຼື ດາວໂຫລດ ຄູ່ມືນໍາໃຊ້ລະບົບການລາຍງານ STR ແລະ CTR ໄດ້ທີ່ ເວບໄຊ ສຕຟງ Amlio.gov.la ).

ພ້ອມດຽວກັນນີ້, ການລາຍງານ STR ແລະ CTR ເລີ່ມຈັດຕັ້ງປະຕິບັດການໃນວັນທີ 02 ມັງກອນ 2019 ເປັນຕົ້ນໄປ ແລະ ສະເໜີ ບັນດາທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈໍາ, ບໍລິສັດໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດປະກັນໄພ ສົ່ງໜັງສືສະເໜີຫາ ສຕຟງ ເພື່ອຂໍຊື່ຜູ້ນໍາໃຊ້ (Username) ແລະ ລະຫັດຜ່ານ (Password) ໃນການເຂົ້າລະບົບການລາຍງານດັ່ງກ່າວ ພາຍຫຼັງໄດ້ຮັບແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

ຫົວໜ້າສໍານັກງານຂໍ້ມູນຕ້ານການຟອກເງິນ,

ແພງສີ ແພງເມືອງ

ສອບຖາມຂໍ້ມູນເພີ່ມຕື່ມ ພະແນກວິເຄາະຂ່າວກອງ 021 264506.



Scanned with CamScanner